ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງບໍລິຄໍາໄຊ

ພະແນກ ໂຍທາທິການ ແລະ ຂົນສົ່ງ

ເລກທີ 1904 /ຍທຂ

ບໍລິຄໍາໄຊ, ວັນທີ 05 ພຶດສະພາ 2026

**ໂຄງການ ກໍ່ສ້າງເສັ້ນທາງ ຕາດເຕັກ, ບ້ານເອີດທາດ, ເມືອງທ່າພະບາດ ແຂວງບໍລິຄໍາໄຊ**

## ໜັງສືເຊີນເຂົ້າຮ່ວມແຂ່ງຂັນປະມູນ

1. ພະແນກໂຍທາທິການ ແລະ ຂົນສົ່ງແຂວງບໍລິຄໍາໄຊ ໄດ້ຮັບການຊີ້ນໍາຈາກຂັ້ນເທິງໃນການຈັດຕັ້ງປະຕິບັດ ການປະມູນຈັດຊື້-ຈັດຈ້າງ ໂຄງການ ກໍ່ໂຄງການ ກໍ່ສ້າງເສັ້ນທາງ ຕາເຕັກ ບ້ານເອີດທາດ, ເມືອງປາກຊັນ ແຂວງບໍລິຄໍາໄຊ, ລວງຍາວ 3,850 ກິໂລແມັດ ດ້ວຍການດໍາເນີນການປະມູນເປີດກວ້າງພາຍໃນ, ສໍາລັບບ້ວງເງິນທີ່ຈະຊໍາລະສະສາງ ແມ່ນຈະໄດ້ສະເໜີເອົາເຂົ້າແຜນສາລະບານງົບປະມານແຫ່ງລັດໃນແຕ່ລະສົກປີ.
2. ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງບໍລິຄໍາໄຊ ຂໍເຊີນບັນດາບໍລິສັດ ທີ່ມີໃບອານຸຍາດດໍາເນີນທຸລະກິດດ້ານການກໍ່ສ້າງຂົວ-ທາງ ທີ່ມີຄວາມສົນໃຈ, ເຂົ້າຮ່ວມປະມູນໂຄງການດັ່ງກ່າວນີ້, ໄລຍະການກໍ່ສ້າງແມ່ນ 18 ເດືອນ.
3. ການປະມູນ ຈະດໍາເນີນຕາມຂັ້ນຕອນການປະມູນເປີດກວ້າງ ທີ່ໄດ້ກໍານົດໄວ້ ຢູ່ໃນກົດໝາຍວ່າດ້ວຍການປະມູນຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017 ແລະ ຄໍາແນະນໍາກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການປະມູນຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019.
4. ການປະມູນນີ້ ແມ່ນອະນຸຍາດໃຫ້ທຸກໆບໍລິສັດທີ່ມີຄວາມເໝາະສົມ, ມີໃບອະນຸຍາດດໍາເນີນທຸລະກິດຖືກຕ້ອງຕາມ ກົດໝາຍທີ່ກ່ຽວພັນກັບວຽກທີ່ຈະດໍາເນີນການກໍ່ສ້າງ ຢູ່ໃນຂອບເຂດ ແຂວງບໍລິຄໍາໄຊ ຫຼື ທົ່ວປະເທດ.
5. ບໍລິສັດທີ່ມີຄວາມເໝາະສົມສົນໃຈ ສາມາດຕິດຕໍ່ພົວພັນ ແລະ ຊື້ເອກະສານປະມູນໄດ້ທີ່ ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງບໍລິຄໍາໄຊ, ຂະແໜງຂົວທາງ, ຢູ່ບ້ານທົ່ງໄຊ, ເມືອງປາກຊັນ, ແຂວງບໍລິຄໍາໄຊ, ໂທລະສັບ/ແຟັກ: 054-212091. ໃນວັນ ແລະ ເວລາລັດຖະການ: ວັນຈັນ - ວັນສຸກ, ເວລາ **8:00-12:00 ແລະ 13:00-16:00;** ໂດຍໃຫ້ຍື່ນໜັງສືສະເໜີຫາ ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງບໍລິຄາໄຊ, ເລີ່ມແຕ່ວັນທີ **5 ພຶດສະພາ 2026** ເປັນຕົ້ນໄປ, ໃນລາຄາ 500,000 ກີບ, ຈໍານວນເງິນດັ່ງກ່າວນີ້ ຈະບໍ່ມີການສົ່ງຄືນ, ວິທີການຊໍາລະຕ້ອງຈ່າຍເປັນເງິນສົດ.
6. ຊອງປະມູນໃດຫາກຍື່ນຊ້າກ່ອນເວລາ **9:30 ໂມງເຊົ້າ, ຂອງວັນທີ 12 ມິຖຸນາ 2026**; ຈະບໍ່ໄດ້ຮັບພິຈາລະນາ ແລະ ເປີດຊອງ, ເງິນຄ່າຊອງປະມູນຈະບໍ່ໄດ້ສົ່ງຄືນ.
7. ກອງປະຊຸມ ກ່ອນການຍື່ນຊອງປະມູນ ແລະ ເຂົ້າຢ້ຽມຢາມພາກສະໜາມ (site visit) ຈະໄດ້ຈັດຂຶ້ນໃນວັນທີ **8 ມິຖຸນາ 2026, ເວລາ 9:00** ໂມງເຊົ້າ.
8. ການເປີດຊອງປະມູນ ຈະໄດ້ຈັດຂຶ້ນທີ່ ຫ້ອງປະຊຸມຂະແໜງຂົວທາງ, ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງບໍລິຄໍາໄຊ **ໃນເວລາ 9:30 ໂມງເຊົ້າ, ຂອງວັນທີ 12 ມິຖຸນາ 2026** ໂດຍຊ້ອງໜ້າຄະນະກໍາມະການປະມູນ ແລະ ຕົວແທນຂອງຜູ້ເຂົ້າແຂ່ງຂັນປະມູນ.
9. ເອກະສານປະມູນບໍລິສັດຕ້ອງຂຽນໃບປະຕິຍານຕົນເອງດ້ວຍກຽດສັກສີຂອງບໍລິສັດເພື່ອປະກອບໜັງສືຄໍ້າປະກັນການປະມູນ, ໂດຍໜັງສືຄໍ້າປະກັນການປະມູນຕ້ອງແມ່ນໜັງສືຄໍ້າປະກັນຂອງບໍລິສັດເອງ.

ເຊັນແທນຫົວໜ້າພະແນກ

ຮອງຫົວໜ້າພະແນກ

ພະແນກ ໂຍທາທິການ ແລະ ຂົນສົ່ງ

ແຂວງບໍລິຄໍາໄຊ